ສະມາຄົມ ໄອຊີທີ ການຄ້າລາວ (ລິກ້າ)
2A/01A ຊັ້ນ 2 ອາຄານ ສີຫອມການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

# ແບບຟອມຄຳຮ້ອງເຂົ້າວາງສະແດງ

## 1. ຂໍ້ມູນກ່ຽວກັບຜູ້ວາງສະແດງ

| **ຂໍ້ມູນກ່ຽວກັບຜູ້ວາງສະແດງ** | **ຂໍ້ມູນສຳລັບການອອກບິນ, ຖ້າແຕກຕ່າງ** |
|---|---|
| ຊື່ຜູ້ວາງສະແດງ: ______ | ຊື່ຜູ້ວາງສະແດງ: ______ |
| ທີ່ຢູ່: ______ ______ | ທີ່ຢູ່: ______ ______ |
| ເມືອງ: ______ | ເມືອງ: ______ |
| ລະຫັດໄປສະນີ: ______ | ລະຫັດໄປສະນີ: ______ |
| ປະເທດ: ______ | ປະເທດ: ______ |
| ຊື່ຜູ້ຕິດຕໍ່: ______ | ກະລຸນາລະບຸປະເພດອົງກອນຂອງທ່ານ (ເລືອກປະເພດດຽວເທົ່ານັ້ນ): |
| ໂທ: ______ | ☐ ຜະລິດຕະພັນ ແລະ ໂຊລູຊັນ IT |
| ແຟັກ: ______ | ☐ ເຄື່ອງໄຟຟ້າ |
| ອີເມລ໌: ______ | ☐ ອຸປະກອນ ແລະ ການບໍລິການໂທລະຄົມມະນາຄົມ |
| ເວັບໄຊ໋: ______ | ☐ ການສຶກສາ ແລະ ຝຶກອົບຮົມດ້ານ IT |
| | ☐ ອື່ນໆ: ______ |

ສາມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີຫອມການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

## 2. ປະເພດຂອງການວາງສະແດງ

ກະລຸນາໝາຍເພື່ອເລືອກປະເພດຮ້ານທີ່ທ່ານຕ້ອງການ

☐ **ຮ້ານຂະໜາດໃຫ່ຍປະເພດ A 6.0ມ (ກ) x 6.0ມ (ລ) x 2.4ມ (ສ)** **US$ 4,500** **ຈຳນວນ: ______**

- ພື້ນທີ່ວາງສະແດງ
- ອຸປະກອນວາງສະແດງພື້ນຖານ, ຝາຂັ້ນດ້ານຂ້າງ ແລະ ດ້ານຫລັງ (ສີຂາວ)
- ປ້າຍຊື່ບໍລິສັດ (ຕົວໜັງສືຂະໜາດດຽວກັນໝົດ; ຕັດຈາກເຈ້ຍສີດຳ ແລະ ຕິດໃສ່ພື້ນທີ່ຂາວ)
- ຕັ່ງສີ່ໜ່ວຍ
- ສາຍໄຟຟ້າ ແລະ ເຄື່ອງສາກໄຟຟ້າຄວາມແຮງສູງເຖິງ 220 V1Kw
- ປັກສຽບ 220 V (4 ອັນ)

☐ **ຮ້ານຂະໜາດໃຫ່ຍ ປະເພດ B 9.0ມ (ກ) x 3.0ມ (ລ) x 2.4ມ (ສ)** **US$ 3,375** **ຈຳນວນ: ______**

- ພື້ນທີ່ວາງສະແດງ
- ອຸປະກອນວາງສະແດງພື້ນຖານ, ຝາຂັ້ນດ້ານຂ້າງ ແລະ ດ້ານຫລັງ (ສີຂາວ)
- ປ້າຍຊື່ບໍລິສັດ (ຕົວໜັງສືຂະໜາດດຽວກັນໝົດ; ຕັດຈາກເຈ້ຍສີດຳ ແລະ ຕິດໃສ່ພື້ນທີ່ຂາວ)
- ຕັ່ງສາມໜ່ວຍ
- ສາຍ ແລະ ປັກໄຟຟ້າຄວາມແຮງກະແສໄຟຟ້າຮັບກະແສໄຟເຖິງ 220 V1/Kw
- ປັກສຽບ 220 V (3 ອັນ)

☐ **ຮ້ານຂະໜາດກາງ ປະເພດ C 6.0ມ (ກ) x 3.0ມ (ລ) x 2.4ມ (ສ)** **US$ 2,000** **ຈຳນວນ: ______**

- ພື້ນທີ່ວາງສະແດງ
- ອຸປະກອນວາງສະແດງພື້ນຖານ, ຝາຂັ້ນດ້ານຂ້າງ ແລະ ດ້ານຫລັງ (ສີຂາວ)
- ປ້າຍຊື່ບໍລິສັດ (ຕົວໜັງສືຂະໜາດດຽວກັນໝົດ; ຕັດຈາກເຈ້ຍສີດຳ ແລະ ຕິດໃສ່ພື້ນທີ່ຂາວ)
- ຕັ່ງສອງໜ່ວຍ
- ສາຍ ແລະ ປັກໄຟຟ້າຄວາມແຮງກະແສໄຟຟ້າຮັບກະແສໄຟເຖິງ 220 V1/Kw
- ປັກສຽບ 220 V (2 ອັນ)

☐ **ຮ້ານຂະໜາດມາດຕະຖານ D 3.0ມ (ກ) x 3.0ມ (ລ) x 2.4ມ (ສ)** **US$ 800** **ຈຳນວນ: ______**

- ພື້ນທີ່ວາງສະແດງ
- ອຸປະກອນວາງສະແດງພື້ນຖານ, ຝາຂັ້ນດ້ານຂ້າງ ແລະ ດ້ານຫລັງ (ສີຂາວ)
- ປ້າຍຊື່ບໍລິສັດ (ຕົວໜັງສືຂະໜາດດຽວກັນໝົດ; ຕັດຈາກເຈ້ຍສີດຳ ແລະ ຕິດໃສ່ພື້ນທີ່ຂາວ)
- ຕັ່ງໜຶ່ງໜ່ວຍ

ສາມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີທອງການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

- ສາຍ ແລະ ປັກໄຟຟ້າຄວາມແຮງກະແສໄຟຟ້າຮັບກະແສໄຟເຖິງ 220 V1/Kw
- ປັກສຽບ 220 V (1 ອັນ)

☐ **ການສະໜັບສະໜູນປະເພດໜຶ່ງ (ແພັດຕິນຳ)** **US$ 2,000**

- ເປັນຜູ້ສະໜັບສະໜູນຫລັກໃນງານ ລາວ ໄອຊີທີ ເອັກສໂປ 2010 ຄັ້ງນີ້
- ມີສັນຍາລັກ (ໂລໂກ້) ຂອງບໍລິສັດຢູ່ໃນໂຄສະນາຕ່າງໆ (ແຜ່ນປ້າຍໂຄສະນາ, ໜັງສືພິມ, ວາລະສານ, ເວບໄຊທ໌, ອື່ນໆ)

**ເງື່ອນໄຂພິເສດ** ສາມາດຈັດສຳມະນາໂດຍບໍ່ໄດ້ເສຍຄ່າ 2 ຊົ່ວໂມງ, ນຳໃຊ້ເວທີໂດຍບໍ່ໄດ້ເສຍຄ່າ 30 ນາທີ

- ສາມາດໄດ້ຮັບໂຄສະນາ PR ໃນເວລາສານ ໄອຊີທີ ລາວ ໂດຍບໍ່ເສຍຄ່າໜຶ່ງຄັ້ງ
- ສາມາດອອກໂຄສະນາ ໜຶ່ງໜ້າໃນວາລະສານ ໄອຊີທີ ລາວ ໂດຍບໍ່ໄດ້ເສຍຄ່າ

☐ **ການສະໜັບສະໜູນປະເພດສອງ (ໂກຣ)** **US$ 1,500**

- ເປັນຜູ້ສະໜັບສະໜູນສຳຮອງໃນງານ ລາວ ໄອຊີທີ ເອັກສໂປ 2010 ຄັ້ງນີ້
- ມີການໝາຍບໍລິສັດຢູ່ໃນໂຄສະນາຕ່າງໆ (ແຜ່ນປ້າຍໂຄສະນາ, ໜັງສືພິມ, ວາລະສານ, ເວບໄຊທ໌, ອື່ນໆ)
- ສາມາດຈັດສຳມະນາໂດຍບໍ່ໄດ້ເສຍຄ່າ 1 ຊົ່ວໂມງ, ນຳໃຊ້ເວທີໂດຍບໍ່ໄດ້ເສຍຄ່າ 30 ນາທີ
- ສາມາດໄດ້ຮັບໂຄສະນາ PR ໃນວາລະສານ ໄອຊີທີ ລາວ ໂດຍບໍ່ໄດ້ເສຍຄ່າໜຶ່ງຄັ້ງ
- ສາມາດອອກໂຄສະນາ ເຄິ່ງໜ້າໃນເວລະສານ ໄອຊີທີ ລາວ ໂດຍບໍ່ໄດ້ເສຍຄ່າ

| | | | |
|---|---|---|---|
| ☐ **ຫ້ອງສຳມະນາ (ລາຄາຕໍ່ຊົ່ວໂມງ)** | US$ 100 **(ສຳລັບຜູ້ສະໜັບສະໜູນເທົ່ານັ້ນ)** | **ຈຳນວນ:** | ______________ |
| ☐ Stage usage (ລາຄາຕໍ່ 15 ນາທີ) | US$ 100 **(ສຳລັບຜູ້ສະໜັບສະໜູນເທົ່ານັ້ນ)** | **ຈຳນວນ:** | ______________ |
| ☐ **ເອົາປັກສຽບເພີ່ມ** | US$ 35 | **ຈຳນວນ:** | ______________ |

ຖ້າຫາກວ່າ ທ່ານຕ້ອງການຮ້ານທີ່ຈັດພິເສດ ຫລື ຂະໜາດພິເສດ, ກະລຸນາຕິດຕໍ່ຫ້ອງການຮັບຜິດຊອບງານ.

ສາມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີທອນການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

## 3. ທີ່ຕັ້ງຮ້ານທີ່ຕ້ອງການ




**ໃຫ້ເລືອກໜຶ່ງ ຫລື ຫລາຍພື້ນທີ່ ໃນເນື້ອທີ່ສະຫງວນໄວ້ສຳລັບປະເພດການວາງສະແດງທີ່ທ່ານເລືອກ.**

ທາງເລືອກທີ 1: ________________ທາງເລືອກທີ 2: _________ ທາງເລືອກທີ 3: ________

ໝາຍເຫດ:

1. ການສະໜອງຮ້ານແມ່ນອີງໃສ່ຫລັກການໃຜ່ມາກ່ອນໄດ້ກ່ອນ (ຢືນຢັນພຽງແຕ່ໃນກໍລະນີທີ່ໄດ້ຮັບການຊຳລະແລ້ວ)
2. ພວກຂ້າພະເຈົ້າຈະຕອບສະໜອງຄວາມມັກຂອງທ່ານຕາມທາງເລືອກ (1,2,3).
3. ຖ້າທາງເລືອກທີ່ 1,2 ແລະ 3 ຂອງທ່ານ ມີຄົນຈອງແລ້ວ, ພວກຂ້າພະເຈົ້າຈະພະຍາຍາມຈັດທ່ານ ໃສ່ບ່ອນທີ່ໃກ້ ກັບຄວາມຕ້ອງການຂອງທ່ານເທົ່ານທີ່ຈະເປັນໄປໄດ້.
4. ຜູ້ຈັດງານ ເອັກສໂປ ມີສິດເຕັມສ່ວນໃນການຍ້າຍສະຖານທີ່ວາງສະແດງໃດໜຶ່ງໄດ້ທຸກເວລາເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງງານວາງສະແດງ.

**ພວກຂ້າພະເຈົ້າຈະຢັ້ງຢືນການຈັບຈອງຂອງທ່ານເມື່ອໄດ້ຮັບການຊຳລະຄ່າຈັບຈອງຄົບຖ້ວນພ້ອມທັງການ ປະກອບຟອມຈັບຈອງສຳນັກງານ**

ສະມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີທອນການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

## 4. ຕາຕະລາງ ແລະ ການຕິດຕໍ່ພົວພັນ

**ຕາຕະລາງໃນການລົງທະບຽນການວາງສະແດງ ສຳລັບ ລາວ ໄອຊີທີ ເອັກສໂປ 2010**

| | |
|---|---|
| **ວັນທີ 10 ພະຈິກ 2009** | ເປີດຮັບການລົງທະບຽນ |
| **ວັນທີ 24 ທັນວາ 2009** | ປິດຮັບການລົງທະບຽນ |

**ຕາຕະລາງສຳລັບ ຫ້ອງວາງສະແດງສຳລັບ ລາວ ໄອຊີທີ ເອັກສໂປ 2010**

| | | |
|---|---|---|
| **ເວລາຕິດຕັ້ງການວາງສະແດງ** | ວັນທີ 13 ມັງກອນ 2010 | 8:00 ໂມງ – 17:00 ໂມງ |
| **ເວລາວາງສະແດງ** | ວັນທີ 14 ຫາ 17 ມັງກອນ 2010 | 10:00 ໂມງ – 21:00 ໂມງ |
| **ເວລາເກັບມ້ຽນຮ້ານວາງສະແດງ** | ວັນທີ 18 ມັງກອນ 2010 | 8:00 ໂມງ – 5:00 ໂມງ |

ສາມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີຫອມການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org

## 5. ມາດຖານ ແລະ ເງື່ອນໄຂຂອງການວາງສະແດງ

ບັນດາລະບຽບລຸ່ມນີ້ມີຜົນບັງຄັບໃຊ້ພາຍຫລັງການຮັບຮອງເອົາສັນຍາສະບັບນີ້ ໂດຍສະມາຄົມ ໄອຊີທີ ການຄ້າລາວ (ລີກ້າ), ຜູ້ສະໜັບສະໜູນ ແລະ ບໍລິສັດຈັດງານສະແດງ.

**A. ການເຊົ່າສະຖານທີ່ວາງສະແດງ:** ການເຊົ່າສະຖານທີ່ວາງສະແດງຕ້ອງແມ່ນ ສຳລັບໃຊ້ໂດຍອີງການທີ່ເຮັດສັນ ຍາທີ່ລະບຸໃນໃບສະໝັກເຂົ້າວາງສະແດງ ແລະ ບໍ່ສາມາດໃຫ້ພາກສ່ວນອື່ນເຊົ່າຕໍ່ແມ່ນ ແຕ່ສ່ວນໃດສ່ວນໜຶ່ງຂອງພື້ນທີ່ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຮັບຜິດຊອບຈັດງານ.

**B. ການມອບພື້ນທີ່:** ຈະມີການຈັດສັນແລະມອບພື້ນ ທີ່ກໍຕໍ່ເມື່ອໄດ້ຮັບໃບສະໝັກແລະຄ່າເຊົ່າຢ່າງຄົບຖ້ວນ ອີງຕາມຫຼັກການຜູ້ມາກ່ອນໄດ້ກ່ອນ. ຄະນະຮັບຜິດຊອບ ເອັກສໂປ ມີສິດມອບຄືນພື້ນທີ່ວາງສະແດງໄດ້ທຸກເວລາເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງງານວາງສະແດງ.

**C. ປ້າຍ ແລະ ການໂຄສະນາ:** ຫ້າມບໍ່ໃຫ້ຕິດປ້າຍ ຫຼື ການໂຄສະນາຢູ່ນອກພື້ນທີ່ວາງສະແດງ.

**D. ເວລາວາງສະແດງ:** ການວາງສະແດງຕ້ອງມີພະ ນັກງານຮັບຜິດຊອບຢູ່ໃນຊົ່ວໂມງວາງສະແດງ. ການປະ ຕິບັດຕາມຕາຕະລາງການຕິດຕັ້ງ ແລະ ເກັບມ້ຽນ ຮ້ານມີຄວາມຈຳເປັນ. LICA ມີສິດຍົກເລີກສ່ວນໃດໜຶ່ງ ຫຼື ທັງໝົດການວາງສະແດງທີ່ຄັດກັບກອງປະຊຸມ.

**E. ການສູນເສຍ, ເສຍຫາຍ.:** ລີກ້າ, ຜູ້ສະໜັບສະໜູນ, ພະນັກງານ ຫຼື ຕົວແທນຂອງເຂົາເຈົ້າຈະບໍ່ ຮັບຜິດຊອບຕໍ່ການເຈັບເປັນ, ການສູນເສຍ, ການເສຍຫາຍທີ່ເກີດຂຶ້ນກັບຜູ້ວາງສະແດງ ຫຼື ຊັບສິນຂອງເຂົາເຈົ້າ. ໂດຍການເຊັນໃບສະໝັກເຊົ່າຮ້ານວາງສະແດງ, ຜູ້ວາງສະແດງຈະບໍ່ຮຽກຮ້ອງໃຫ້ ລີກ້າ, ຜູ້ສະໜັບສະໜູນທຶນ, ພະນັກງານ ຫຼື ຕົວແທນຂອງເຂົາເຈົ້າ ຊົດເຊີຍຄ່າເສຍຫາຍຈາກການສູນເສຍ, ການແຕກຫັກ ຫຼື ການເຈັບເປັນ.ແນະນຳໃຫ້ຜູ້ວາງສະແດງເຮັດປະກັນໄພ.

**F. ການຂາຍ:** ທຸກໆການຂາຍໃນຮ້ານຕ້ອງປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງກັບ ພາສີອາກອນ.

**G. ສິ່ງພິມ:** ການແຈກສິ່ງພິມຕ້ອງຢູ່ໃນຂອບເຂດຮ້ານວາງສະແດງທີ່ຜູ້ວາງສະແດງໄດ້ຮັບອະນຸມັດ ແລະ ຈະບໍ່ປະສິ່ງພິມໄວ້ບ່ອນອື່ນໆຂອງພື້ນທີ່ກອງປະຊຸມ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຮັບຜິດຊອບກອງປະຊຸມ.

**H. ການເກັບມ້ຽນສິ່ງບັນຈຸເປົ່າ:** ຜູ້ວາງສະແດງຕ້ອງຊອກສະຖານທີ່ຢູ່ບ່ອນອື່ນເພື່ອເກັບມ້ຽນສິ່ງບັນຈຸເປົ່າ ແລະ ວັດສະດຸຂົນສົ່ງໃນເວລາຈັດກອງປະຊຸມ. ການຈັດຫາ ສະຖານທີ່ດັ່ງກ່າວຕ້ອງເຮັດຜ່ານບໍລິສັດຈັດງານຢ່າງ ເປັນທາງການທີ່ລະບຸໃນເອກະສານສະບັບນີ້.

**I. ການສິ້ນສຸດ:** ຖ້າມີການຍົກເລີກ ກອງປະຊຸມເນື່ອງຈາກການໂຮງຊຸມນຸມ, ການປະທ້ວງ, ການຍຶດ, ການກີດຂວາງ, ສົງຄາມ, ການກໍ່ການຮ້າຍ, ເຫດບໍ່ຄາດຫວັງ, ຫຼື ເຫດສຸກເສີນ ທີ່ອີງການຈັດຕັ້ງລັດຖະບານປະກາດ, ຜູ້ວາງສະແດງລົບລ້າງ ສ່ວນໃດໜຶ່ງຫຼື ທັງໝົດຂອງຜົນເສຍຫາຍ. ລີກ້າ ອາດຈະ, ພາຍຫຼັງ ຫັກຕົ້ນທຶນແລະ ລາຍຈ່າຍຕ່າງໆ ລວມທັງເງິນສະສົມສຳລັບການຮຽກຮ້ອງ, ຄືນເງິນໃຫ້ຜູ້ວາງສະແດງ ຕາມອັດຕາສ່ວນຂອງເງິນທີ່ຜູ້ວາງສະແດງໄດ້ຊຳລະ.

**J. ການຍົກເລີກ:** ຈະບໍ່ມີການຄືນເງິນສຳລັບການຍົກເລີກການຈອງສະຖານທີ່ພາຍຫຼັງຂະບວນການລົງທະບຽນສຳເລັດ, ແຕ່ ລີກ້າ ສາມາດຈັດຄືນ ຫຼື ຂາຍພື້ນທີ່ຕໍ່ ໂດຍບໍ່ມີການຄືນຜົນປະໂຫຍດຫຍັງໝົດໃຫ້ແກ່ຜູ້ວາງສະແດງ.

**K. ງານຕ່າງໆ:** ງານ, ເຫດການ ຫຼື ກອງປະຊຸມ ທີ່ໄດ້ຮັບການສະໜັບສະໜູນຈາກຜູ້ວາງສະແດງ ຕ້ອງໄດ້ຮັບການຈັດລ່ວງໜ້າໂດຍຜ່ານ ລີກ້າ ແລະ ຈະບໍ່ຕຳກັບຕາຕະລາງກອງປະຊຸມ.

## 6. ວິທີ ແລະ ເງື່ອນໄຂການຊຳລະ

**ເງື່ອນໄຂການຊຳລະ:** **100% ໃນເວລາສົ່ງໃບສະໝັກ**

**ຄຳແນະນຳ ໃນການຊຳລະ:**

ເຊັກ (ເປັນເງິນສົດໂດລາສະຫະລັດ) ສາມາດຊຳລະໃຫ້:

**ສາມາດຊຳລະໃຫ້:**

ຊື່ທະນາຄານ: ທະນາຄານ ANZ
ຊື່ບັນຊີ: ສະມາຄົມ ໄອຊີທີ ການຄ້າລາວ (Expo 2010)
ເລກບັນຊີ: 1201006739
ສະກຸນເງິນ: USD (ໂດລາສະຫະລັດ)

ຊື່ທະນາຄານ: ທະນາຄານ ANZ
ຊື່ບັນຊີ: ສະມາຄົມ ໄອຊີທີ ການຄ້າລາວ
ເລກບັນຊີ: 1200007071
ສະກຸນເງິນ: ກີບ

HSBC BANK USA, N.A., NEW YORK
SWIFT : MRMDUS33
CHIPS UID : 280304, 299779, 370582
CHIPS Member No. 0108
452 Fifth Ave, New York City
NY 10018, U.S.A
ໂທ: 302-636-2730
ແຟັກ: 3023272250

ທະນາຄານ ANZ ການຄ້າວຽງຈັນ ຈຳກັດ
ເລກບັນຊີ. 000152463
SWIFT : VCBBLALA
TELEX : 4365 VCBANK
33 ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ໝາຍເຫດ: ຄ່າບໍລິການທະນາຄານຕ້ອງເປັນຄວາມຮັບຜິດຊອບຂອງຜູ້ວາງສະແດງ**

ສາມາຄົມ ໄອຊີທີ ການຄ້າລາວ (ລີກ້າ)
2A/01A ຊັ້ນ 2 ອາຄານ ສີທອງການຄ້າ (SCC) , ຖະໜົນຫລວງພະບາງ, ນະຄອນຫລວງວຽງຈັນ, ຕູ້ ປ.ນ 9153,
ໂທ: + 856 21 250 850-1, ແຟັກ: + 856 21 219117, + 856 21 250 103
ອີເມລ໌: ICTExpo@lica.laopdr.org
ເວບໄຊ໌: http://:lica.laopdr.org/ictexpo201

## 7. ການເຊັນເພື່ອຢືນຢັນ

(1) ກະລຸນາເຊັນ ແລະ ລົງວັນທີ ເພື່ອຢັ້ງຢືນວ່າທ່ານໄດ້ອ່ານ, ເຂົ້າໃຈ ແລະ ຕົກລົງກັບລາຄາ ແລະ ເງື່ອນໄຂຕ່າງໆຂອງ ການວາງສະແດງ.

ຊື່ຜູ້ຮັບຜິດຊອບ ________________________ ຕຳແໜ່ງ ____________________
ຈ້ຳກາບໍລິສັດ ແລະ ລົງລາຍເຊັນ ________________________ ວັນທີ: ______________
(2) ກະລຸນາປະກອບແບບຟອມດັ່ງກ່າວນີ້ (ໜ້າ 4-9) ແລະ ສົ່ງຜ່ານອີເມລ໌ ICTexpo@lica.laopdr.org ຫຼື
ແຟັກ +856 21 453919
ພວກຂ້າພະເຈົ້າຈະຢັ້ງຢືນການຈັບຈອງຂອງທ່ານເມື່ອໄດ້ຮັບການຊຳລະຄ່າຈັບຈອງຄົບຖ້ວນພ້ອມທັງການປະກອບຟອມ ຈັບຈອງສຳລັບງານ